ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

************************

ລັດຖະບານ

ເລກທີ 246 / ລບ

ນະຄອນຫຼວງວຽງຈັນ, ວັນທີ 23/ 07/2014

# ດຳລັດ
# ວ່າດ້ວຍຮູບເງົາ

- ອີງຕາມກົດໝາຍວ່າດ້ວຍລັດຖະບານ ແຫ່ງ ສປປ ລາວ ສະບັບເລກທີ 02/ສພຊ, ລົງວັນທີ 06 ພຶດສະພາ 2003;
- ອີງຕາມກົດໝາຍວ່າດ້ວຍສື່ມວນຊົນ ສະບັບເລກທີ 01/ສພຊ, ລົງວັນທີ 25 ກໍລະກົດ 2008;
- ອີງຕາມໜັງສືສະເໜີຂອງ ລັດຖະມົນຕີວ່າການ ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະທ່ອງທ່ຽວ ສະບັບເລກທີ 120/ຖວທ, ລົງວັນທີ 21 ກຸມພາ 2014.

## ລັດຖະບານ ອອກດຳລັດ:

## ໝວດທີ 1

## ບົດບັນຍັດທົ່ວໄປ

**ມາດຕາ1.ຈຸດປະສົງ**

ດຳລັດສະບັບນີ້ ກຳນົດຫຼັກການ, ລະບຽບການ ແລະມາດຕະການກ່ຽວກັບການຄຸ້ມຄອງ, ຕິດຕາມ ກວດກາ ການຈັດຕັ້ງ ແລະການເຄື່ອນໄຫວວຽກງານຮູບເງົາ ເພື່ອຮັບປະກັນສິດ ແລະພັນທະຂອງການຈັດຕັ້ງ, ນິຕິບຸກຄົນ ແລະບຸກຄົນທີ່ເຂົ້າຮ່ວມການເຄື່ອນໄຫວດຳເນີນກິດຈະການກ່ຽວກັບຮູບເງົາ ແນໃສ່ຮັບປະກັນໃຫ້ການຄຸ້ມຄອງ ແລະກວດກາຮູບເງົາເປັນລະບົບ ແລະເອກະພາບໃນຂອບເຂດທົ່ວປະເທດ, ເຮັດໃຫ້ວຽກງານຮູບເງົາເປັນພາຫະນະອັນໜຶ່ງປະກອບສ່ວນເຂົ້າໃນການປົກປັກຮັກສາ ແລະສົ່ງເສີມມູນມໍຣະດົກທາງດ້ານວັດທະນະທຳອັນດີງາມຂອງຊາດ ແລະຂອງບັນດາເຜົ່າໃຫ້ຍືນຍົງຄຽງຄູ່ຊາດລາວຕະຫຼອດໄປ.

**ມາດຕາ 2. ຮູບເງົາ**

ຮູບເງົາແມ່ນສິລະປະສັງລວມ ແລະເປັນສື່ບັນເທີງທີ່ເຂົ້າເຖິງຢ່າງກວ້າງຂວາງໂດຍໄດ້ສະແດງໃຫ້ເຫັນເປັນພາບເຄື່ອນໄຫວປະກອບກັບສຽງໄດ້ບັນ ທຶກໃສ່ຟີມ, ກາແຊັດວີດີໂອ, ແຜ່ນຊີດີ, ດີວີດີ, ຮາດດິດ ຫຼື ວັດຖຸບັນທຶກແບບອື່ນເພື່ອເຜີຍແຜ່ຕໍ່ມວນຊົນ ໂດຍຜ່ານພາຫະນະເຕັກນິກຕ່າງໆ.

**ມາດຕາ 3. ການອະທິບາຍຄຳສັບ**



ຄຳສັບທີ່ນຳໃຊ້ໃນດຳລັດສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ຟິມງານຮູບເງົາ** ໝາຍເຖິງ ຮູບເງົາທີ່ໄດ້ຜະລິດສົມບູນແລ້ວ;
2. **ຟີມຮູບເງົາ** ໝາຍເຖິງ ຮູບເງົາທີ່ຜະລິດດ້ວຍພາຫະນະເຕັກນິກຮູບເງົາ ໄດ້ບັນທຶກໃສ່ຟີມເພື່ອສາຍໃນຈໍພາບໂດຍຜ່ານເຄື່ອງສາຍ;
3. **ຮູບເງົາວີດີໂອ** ໝາຍເຖິງ ຮູບເງົາທີ່ຜະລິດດ້ວຍພາຫະນະເຕັກນິກວີດີໂອ ໂດຍໄດ້ບັນທຶກໃສ່ກາແຊັດວີດີໂອ, ແຜ່ນຊີດີ, ດີວີດີ, ຮາດດິດ ຫຼື ວັດຖຸບັນທຶກແບບອື່ນເພື່ອສາຍໂດຍຜ່ານເຄື່ອງສາຍວີດີໂອ, ຊີດີ, ດີວີດີ ແລະແບບອື່ນ;
4. **ຮູບເງົາໂທລະພາບ** ໝາຍເຖິງ ຮູບເງົາເພື່ອອອກອາກາດໃນຄື້ນໂທລະພາບ;
5. **ກາແຊັດ ຫຼືແຜ່ນຮູບເງົາ** ໝາຍເຖິງ ຮູບເງົາທີ່ສຳເນົາຈາກຟີມຮູບເງົາໃສ່ກາແຊັດວີດີໂອ, ແຜ່ນວີຊີດີ, ແຜ່ນດີວີດີ ແລະແບບອື່ນ;
6. **ບົດຮູບເງົາ** ໝາຍເຖິງ ບົດເລື່ອງຮູບເງົາໃນຮູບແບບເອກະສານ ໂດຍໄດ້ສະແດງໃຫ້ເຫັນທຸກການພັນປ່ຽນຂອງເລື່ອງຮູບເງົາ;
7. **ບົດຖ່າຍທຳຮູບເງົາ** ໝາຍເຖິງ ການປະດິດສ້າງຂອງຜູ້ກຳກັບໃນຮູບແບບເອກະສານ ໂດຍໄດ້ສະແດງດ້ວຍເຕັກນິກວິຊາສະເພາະ ແລະວິທີການປະຕິບັດບັນດາສາກຖ່າຍທຳ ຊຶ່ງອີງໃສ່ເນື້ອໃນຂອງບົດຮູບເງົາ;
8. **ການເຄື່ອນໄຫວຮູບເງົາ** ໝາຍເຖິງ ການຜະລິດ, ການຈຳໜ່າຍ, ການເຜີຍແຜ່ ແລະການສຳເນົາຮູບເງົາ;
9. **ການຜະລິດຮູບເງົາ** ໝາຍເຖິງ ຂະບວນການສ້າງຮູບເງົາ ຈາກບົດຮູບ

ເງົາຈົນເຖິງຮູບເງົາໄດ້ຜະລິດສຳເລັດ;

10. **ການຈຳໜ່າຍຮູບເງົາ** ໝາຍເຖິງ ການນຳຮູບເງົາໄປສູ່ສັງຄົມດ້ວຍຮູບການຂາຍ, ການໃຫ້ເຊົ່າ, ສົ່ງອອກ ແລະນຳເຂົ້າ;
11. **ການເຜີຍແຜ່ຮູບເງົາ** ໝາຍເຖິງ ການນຳເອົາຮູບເງົາໄປເຖິງມວນຊົນໂດຍຜ່ານການສາຍ, ອອກອາກາດທາງໂທລະພາບ, ສື່ງເຂົ້າເຄືອຂ່າຍອິນເຕີເນັດ ແລະພາຫະນະອື່ນໆ;
12. **ໜ່ວຍງານຮູບເງົາ** ໝາຍເຖິງ ໜ່ວຍງານທີ່ການຈັດຕັ້ງ ຫຼືບຸກຄົນສ້າງຂຶ້ນ ຊຶ່ງເຄື່ອນໄຫວໃນຂົງເຂດການຜະລິດຮູບເງົາ, ການຈຳໜ່າຍ, ເຜີຍແຜ່ຮູບເງົາຕາມທີ່ໄດ້ກຳນົດໄວ້ໃນດຳລັດສະບັບນີ້ ແລະລະບຽບກົດໝາຍອື່ນທີ່ກ່ຽວຂ້ອງ;
13. **ໜ່ວຍງານບໍລິການຜະລິດຮູບເງົາ** ໝາຍເຖິງ ການຈັດຕັ້ງ ຫຼືຜູ້ປະກອບການໃດໜຶ່ງທີ່ໄດ້ຮັບອະນຸຍາດໃຫ້ດຳເນີນການສະໜອງພາຫະນະອຸປະກອນເຕັກນິກ ແລະແຮງງານໃຫ້ແກ່ການຜະລິດຮູບເງົາ;
14. **ເຈົ້າຂອງກຳມະສິດຮູບເງົາ** ໝາຍເຖິງ ການຈັດຕັ້ງ, ນິຕິບຸກຄົນ ແລະບຸກຄົນທີ່ລົງທຶນດ້ານການເງິນເພື່ອຜະລິດ ຫຼືຊື້ກຳມະສິດ ແລະໄດ້ຮັບການມອບໃຫ້ ຫຼືສືບທອດກຳມະສິດນຳໃຊ້ຮູບເງົາ ແລະຮູບການອື່ນຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

**ມາດຕາ 4. ນະໂຍບາຍຂອງລັດກ່ຽວກັບວຽກງານຮູບເງົາ**

ລັດມີນະໂຍບາຍກ່ຽວກັບວຽກງານຮູບເງົາ ດັ່ງນີ້:

1. ສົ່ງເສີມ ແລະພັດທະນາວຽກງານຮູບເງົາໃຫ້ມີການຂະຫຍາຍຕົວຢ່າງ



ກວ້າງຂວາງມີຄວາມເຂັ້ມແຂງ ແລະມີຄຸນນະພາບດ້ວຍການສ້າງ ແລະປະກອບບຸກຄະລາກອນ, ສະໜອງງົບປະມານ, ພາຫະນະ, ວັດຖຸປະກອນເຕັກນິກ, ເຕັກໂນໂລຊີທີ່ທັນສະໄໝ ແລະອື່ນໆ;

2. ຊຸກຍູ້ ແລະສົ່ງເສີມໃຫ້ອົງການຈັດຕັ້ງ, ນິຕິບຸກຄົນ, ບຸກຄົນພາຍໃນ ແລະຕ່າງປະເທດເຂົ້າຮ່ວມການເຄື່ອນໄຫວຮູບເງົາຕາມການກຳນົດຂອງລະບຽບກົດໝາຍຮັບປະກັນໃຫ້ບັນດາໜ່ວຍງານຮູບເງົາມີສິດສະເໝີພາບໃນການເຄື່ອນໄຫວ;
3. ອຳນວຍຄວາມສະດວກໃຫ້ແກ່ໜ່ວຍງານຮູບເງົາທີ່ສ້າງຕັ້ງຂຶ້ນໂດຍຖືກຕ້ອງຕາມກົດໝາຍໄດ້ເຄື່ອນໄຫວຢ່າງກວ້າງຂວາງໃນຂອບເຂດທົ່ວປະເທດ ແລະຕ່າງປະເທດ;
4. ປົກປ້ອງລິຂະສິດຂອງເຈົ້າຂອງຜະລິດຕະພັນຮູບເງົາແລະສິດທີ່ກ່ຽວຂ້ອງຕາມກົດໝາຍວ່າດ້ວຍ ຊັບສິນທາງປັນຍາແລະລະບຽບກົດໝາຍອື່ນທີ່ກ່ຽວຂ້ອງ;
5. ສົ່ງເສີມການພົວພັນຮ່ວມມືດ້ານຮູບເງົາກັບຕ່າງປະເທດ ດ້ວຍການຊຸກຍູ້ ການເຄື່ອນໄຫວດ້ານວິຊາການ, ການແລກປ່ຽນບົດຮຽນ ຂໍ້ມູນຂ່າວສານ, ວິທະຍາສາດ ແລະເຕັກໂນໂລຊີ.

**ມາດຕາ 5. ຂອບເຂດການນຳໃຊ້ດຳລັດ**

ດຳລັດສະບັບນີ້ ນຳໃຊ້ສຳລັບບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງທັງພາຍໃນ ແລະ ຕ່າງປະເທດທີ່ເຄື່ອນໄຫວ ແລະດຳເນີນກິດຈະການ ການຜະລິດ, ການຈຳໜ່າຍ, ການເຜີຍແຜ່, ການບໍລິການ ແລະການຖ່າຍທຳຮູບເງົາ ຢູ່ດິນແດນຂອງ ສປປ ລາວ.

## ໝວດທີ 2

## ປະເພດຮູບເງົາ

**ມາດຕາ 6. ປະເພດຮູບເງົາ**

ຮູບເງົາແບ່ງອອກເປັນປະເພດ ດັ່ງນີ້:

1. ຮູບເງົາສາລະຄະດີ;
2. ຮູບເງົາວິທະຍາສາດ;
3. ຮູບເງົາກາຕູນ;
4. ຮູບເງົາເລື່ອງ.

**ມາດຕາ 7. ຮູບເງົາສາລະຄະດີ**

ຮູບເງົາສາລະຄະດີ ເປັນລາຍການທີ່ບັນລະຍາຍ ຫຼືພັນລະນາເຖິງເລື່ອງໃດເລື່ອງໜຶ່ງຢ່າງລະອຽດຕັ້ງແຕ່ຕົ້ນຈົນຈົບ ຫຼືອາດຈະເປັນການໄຈ້ແຍກບັນຫາໃດໜຶ່ງຢ່າງເລິກເຊິ່ງ ໂດຍມີຈຸດປະສົງ ເພື່ອໃຫ້ຂ່າວສານ, ຫຼັກຖານ, ຂໍ້ມູນຕ່າງໆແກ່ຜູ້ຊົມເປັນຂັ້ນຕອນຕາມລຳດັບຊຶ່ງປະກອບມີ 2 ລັກສະນະຄື:

1. ສາລະຄະດີແບບເບົາສະໝອງ ( Feature ): ສາລະຄະດີລັກສະນະນີ້ ບໍ່ຕ້ອງການເນື້ອໃນລະອຽດເລິກເຊິ່ງ ແລະໜັກສະໝອງ ພຽງແຕ່ສະເໜີເລື່ອງກວ້າງໆພໍເຂົ້າໃຈດ້ວຍຮູບແບບທີ່ໃຫ້ຄວາມບັນເທີງ ສາລະຄະດີລັກສະນະນີ້ ມີຄື: ສາລະຄະດີທົ່ວໄປ, ສາລະຄະດີວັນສຳຄັນຕ່າງໆຂອງຊາດ, ສາລະຄະດີທ່ອງທ່ຽວ ແລະ ສາລະຄະດີປະຫັວດສາດ;
2. ສາລະຄະດີແບບລົງເລິກລາຍລະອຽດ ( Documentary ): ສາລະຄະດີລັກສະນະນີ້ມີເນື້ອໃນຂໍ້ມູນຄວາມຈິງລະອຽດເລິກເຊິ່ງເພື່ອເຮັດໃຫ້ສາລະຄະດີເລື່ອງນັ້ນມີຄວາມເຊື່ອຖື, ສ່ວນຫຼາຍຈະໃຊ້ວິທີສຳພາດ, ບັນລະຍາຍ,ລາຍງານນອກສະຖານທີ່, ສົນທະນາ ແລະ ໃຊ້ສຽງປະກອບຈາກສຽງຈິງຫຼືສຽງສົດທີ່ບັນທຶກໄວ້ ແລະຕ້ອງສ້າງຄວາມດຶງດູດຄວາມສົນໃຈຂອງຜູ້ຊົມດ້ວຍເຕັກນິກການຜະລິດທີ່ມີສຽງສົດປະກອບໃຫ້ຫຼາຍທີ່ສຸດ ສາລະຄະດີຊະນິດນີ້ມີຄື: ສາລະຄະດີວິເຄາະ ແລະສາລະຄະດີຂ່າວ.

**ມາດຕາ 8. ຮູບເງົາວິທະຍາສາດ**

ຮູບເງົາວິທະຍາສາດແມ່ນການສັງລວມເອົາຮູບແບບວິທີການຕ່າງໆທີ່ກ້າວໜ້າຕົວຈິງມາໄຈ້ແຍກອະທິບາຍແຕ່ລະບັນຫາໃຫ້ຄົນໄດ້ຮຽນຮູ້.

**ມາດຕາ 9. ຮູບເງົາກາຕູນ**

ຮູບເງົາກາຕູນ ແມ່ນຮູບພາບແຕ້ມ ໂດຍຜ່ານຂະບວນການຖ່າຍທຳທາງດ້ານເຕັກນິກ ແລະເອເລັກໂຕຣນິກທີ່ສາມາດເຮັດໃຫ້ຮູບແຕ້ມມີການເຄື່ອນເໜັງໄດ້.

**ມາດຕາ 10. ຮູບເງົາເລື່ອງ**

ຮູບເງົາເລື່ອງແມ່ນຮູບເງົາທີ່ສັງລວມເອົາຍອດຂອງການສະແດງສິລະປະປະເພດຕ່າງໆດ້ວຍການສະແດງເປັນເລື່ອງຄ້າຍຄວາມຈິງ ຊຶ່ງປະກອບມີຫຼາຍລັກສະນະ ດັ່ງນີ້:

1. ຮູບເງົາເລື່ອງຊີວິດ ແມ່ນເວົ້າກ່ຽວກັບຄອບຄົວ ແລະການໃຫ້ກຳລັງໃຈໃນການດຳລົງຊີວິດຂອງຄົນ;
2. ຮູບເງົາເລື່ອງຕະຫຼົກ ແມ່ນການສະແດງຮຽນແບບ ແລະບາງຄັ້ງສຽດ

ສີວິຖີຊີວິດຂອງຄົນໃນສັງຄົມ;

3. ຮູບເງົາເລື່ອງຕໍ່ສູ້ ແມ່ນເວົ້າກ່ຽວກັບການໃຊ້ກຳລັງ ແລະຄວາມຮຸນແຮງເພື່ອເອົາຊະນະບັນຫາຕ່າງໆ;
4. ຮູບເງົາເລື່ອງຄວາມຮັກ ແມ່ນໄດ້ສະທ້ອນເຖິງຄວາມຮັກຂອງບ່າວສາວທີ່ຕ້ອງໃຊ້ອາລົມໃນການສະແດງເປັນພິເສດ;
5. ຮູບເງົາເລື່ອງສະຫຍອງຂັວນ ແມ່ນເຮັດໃຫ້ຜູ້ຊົມຕື່ນເຕັ້ນ ແລະບາງຄັ້ງກໍຕົກໃຈໄປກັບເຫດການໃນເລື່ອງ;
6. ຮູບເງົາເລື່ອງສືບສວນ-ສອບສວນ ແມ່ນເວົ້າເຖິງບັນຫາປິດສະໜາທີ່ຕ້ອງໃຊ້ຄວາມສາມາດ ແລະຄວາມຮູ້ອັນຊຳນານຂອງນັກກົດໝາຍເພື່ອໄຂບັນຫາປິດສະໜາ;
7. ຮູບເງົາເລື່ອງຜີສາງນາງໄມ້ ແມ່ນການນຳເອົາຄວາມເຊື່ອທີ່ບໍ່ມີຄຳຕອບທີ່ແນ່ນອນມາສ້າງເປັນຮູບເງົາ ຊຶ່ງຈະເຮັດໃຫ້ຜູ້ຊົມມັກເບິ່ງເພື່ອເປັນການຢືນຢັນ ແລະໄຂປິດສະໜາຄວາມເຊື່ອຂອງບຸກຄົນ;
8. ຮູບເງົາເລື່ອງລັກສະນະອື່ນ.

## ໝວດທີ 3
## ກິດຈະການກ່ຽວກັບຮູບເງົາ

### ມາດຕາ 11. ຮູບແບບກິດຈະການກ່ຽວກັບຮູບເງົາ

ກິດຈະການກ່ຽວກັບຮູບເງົາ ມີຮູບແບບ ດັ່ງນີ້:

1. ການຜະລິດຮູບເງົາ;
2. ການນຳເຂົ້າ ແລະສົ່ງອອກ ຮູບເງົາ;



3. ການບໍລິການຮູບເງົາ;
4. ການເຜີຍແຜ່ຮູບເງົາ;
5. ຮູບການເຜີຍແຜ່ຮູບເງົາ;
6. ການສາຍຮູບເງົາຢູ່ໃນໂຮງ ແລະເຄື່ອນທີ່;
7. ການຈັດ, ການເຂົ້າຮ່ວມງານມະຫາກຳ, ສັບປະດາ ແລະງານວາງສະແດງຮູບເງົາ;
8. ຮູບແບບກິດຈະການອື່ນ.

### ມາດຕາ 12. ການຜະລິດຮູບເງົາ

ບັນດາການຈັດຕັ້ງຂອງລັດ,ການຈັດຕັ້ງມະຫາຊົນ, ການຈັດຕັ້ງສັງຄົມ, ນິຕິບຸກຄົນ, ບຸກຄົນທີ່ດຳລົງຊີວິດຢູ່ ສປປ ລາວ ທີ່ເປັນຄົນລາວ ແລະຕ່າງປະເທດທີ່ມີຈຸດປະສົງຈະຜະລິດຮູບເງົາ ຕ້ອງເອົາເນື້ອໃນບົດເລື່ອງຮູບເງົາໄປກວດຜ່ານ ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະທ່ອງທ່ຽວ ຈຶ່ງສາມາດດຳເນີນການຖ່າຍທຳ ແລະການຜະລິດຮູບເງົາ.

ການຈັດຕັ້ງ, ນິຕິບຸກຄົນ, ບຸກຄົນ ທີ່ມາຈາກຕ່າງປະເທດ ມີຈຸດປະສົງເຄື່ອນໄຫວຖ່າຍທຳຮູບເງົາຢູ່ ສປປ ລາວ ໃຫ້ຍື່ນຄຳຮ້ອງພ້ອມດ້ວຍເນື້ອໃນບົດຮູບເງົາ,ບົດຖ່າຍທຳ ແລະເອກະສານອື່ນທີ່ກ່ຽວຂ້ອງຕໍ່ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະທ່ອງທ່ຽວເພື່ອຂໍອະນຸຍາດ. ເອກະສານແຕ່ລະສະບັບຕ້ອງແປເປັນພາສາລາວ.

ການຈັດຕັ້ງ, ນິຕິບຸກຄົນ, ບຸກຄົນທີ່ຢູ່ຕ່າງປະເທດ ມີຈຸດປະສົງຜະລິດຮູບເງົາເລື່ອງກ່ຽວກັບ ສປປລາວ ໃຫ້ເອົາເນື້ອໃນບົດຮູບເງົາໄປຜ່ານສະຖານ

ທູດລາວປະຈຳປະເທດທີ່ກ່ຽວຂ້ອງຈຶ່ງສາມາດດຳເນີນການຖ່າຍທຳ ແລະ ການຜະລິດຮູບເງົາ.

**ມາດຕາ 13. ບຸກຄະລາກອນໃນການສ້າງຮູບເງົາ**

ບຸກຄະລາກອນໃນການສ້າງຮູບເງົາ ມີດັ່ງນີ້:

1. ຜູ້ກຳກັບການສ້າງ;
2. ຜູ້ກຳກັບການສະແດງ;
3. ນັກຖ່າຍ;
4. ຜູ້ຮັບຜິດຊອບເຕັກນິກ;
5. ຜູ້ຕັດຕໍ່;
6. ນັກສະແດງ;
7. ນັກພາກຮູບເງົາ;
8. ອື່ນໆ.

ບຸກຄະລາກອນໃນການສ້າງຮູບເງົາ ທີ່ເຄື່ອນໄຫວດຳເນີນກິດຈະການກ່ຽວກັບການສ້າງຮູບເງົາຕ້ອງມີບັດເຄື່ອນໄຫວກ່ຽວກັບວຽກຮູບເງົາໃຫ້ຖືກຕ້ອງຕາມລະບຽບໃນການຄຸ້ມຄອງຊຶ່ງແມ່ນກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະທ່ອງທ່ຽວ ເປັນຜູ້ອອກໃຫ້.

**ມາດຕາ 14. ການສົ່ງອອກ ແລະນຳເຂົ້າຮູບເງົາ**

ບຸກຄົນ, ນິຕິບຸກຄົນ ຫຼືການຈັດຕັ້ງ ທີ່ມີຈຸດປະສົງສົ່ງອອກ ແລະນຳເຂົ້າຮູບເງົາ ເພື່ອຈຳໜ່າຍ ແລະບໍລິການຢູ່ ສປປ ລາວ ຕ້ອງໄດ້ຮັບອະນຸຍາດຈາກ ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະທ່ອງທ່ຽວກ່ອນ ຈຶ່ງມີສິດສົ່ງອອກ ແລະນຳເຂົ້າ.



**ມາດຕາ 15. ເງື່ອນໄຂການນຳເຂົ້າ ແລະສົ່ງອອກຮູບເງົາ**

ການນຳເຂົ້າຮູບເງົາ ເພື່ອຈຳໜ່າຍ ແລະບໍລິການຢູ່ ສປປ ລາວ ຕ້ອງມີເນື້ອໃນທີ່ສ້າງສັນ, ມີປະໂຫຍດໃນການໃຫ້ຄວາມຮູ້ ແລະການບັນເທີງ, ບໍ່ຂັດກັບແນວທາງນະໂຍບາຍຂອງ ພັກ-ລັດ, ບໍ່ຕ້ານລະບອບການປົກຄອງ, ບໍ່ຜິດຕໍ່ວັດທະນະທຳ ແລະຮີດຄອງປະເພນີອັນດີງາມຂອງຊາດ ແລະບໍ່ແຕະຕ້ອງເຖິງຄວາມສາມັກຄີກັບປະເທດເພື່ອນມິດໃນໂລກ.

ການສົ່ງອອກຜະລິດຕະພັນຮູບເງົາ ເພື່ອເຜີຍແຜ່, ຈຳໜ່າຍ ແລະບໍລິການຢູ່ຕ່າງປະເທດຕ້ອງມີເນື້ອໃນດີ ແລະສົ່ງເສີມວັດທະນະທຳອັນດີງາມຂອງຊາດ.

**ມາດຕາ 16. ການບໍລິການຮູບເງົາ**

ບຸກຄົນ, ນິຕິບຸກຄົນ ຫຼືການຈັດຕັ້ງ ທີ່ມີຈຸດປະສົງເອົາຟີມຮູບເງົາຕ່າງປະເທດມາສາຍບໍລິການຢູ່ ສປປ ລາວ ຕ້ອງຜ່ານການກວດກາເນື້ອໃນຈາກກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະທ່ອງທ່ຽວ ກ່ອນສາຍບໍລິການ, ສ່ວນຢູ່ທ້ອງຖິ່ນຕ້ອງຜ່ານພະແນກຖະແຫຼງຂ່າວ, ວັດທະນະທຳ ແລະທ່ອງທ່ຽວຂອງແຂວງ, ນະຄອນ, ເວລາສາຍບໍລິການຕ້ອງພາກເປັນພາສາລາວ ຍົກເວັ້ນຮູບເງົາເອກະສານດ້ານວິຊາການວິທະຍາສາດ-ເຕັກນິກ ແລະຕຳລາຮຽນພາສາຕ່າງປະເທດ ແຕ່ບໍ່ອະນຸຍາດໃຫ້ສຳເນົາໄປຈຳໜ່າຍກ່ອນໄດ້ຮັບອະນຸຍາດຈາກອົງການທີ່ກ່ຽວຂ້ອງ.

**ມາດຕາ 17. ການເຜີຍແຜ່ຮູບເງົາ**

ການເຜີຍແຜ່ຮູບເງົາລາວ ແລະຮູບເງົາຕ່າງປະເທດທີ່ນໍາເຂົ້າເພື່ອຈໍາໜ່າຍ ແລະເຜີຍແຜ່ຢູ່ ສປປລາວ ຕ້ອງຍື່ນຄໍາຮ້ອງພ້ອມດ້ວຍເອກະສານປະກອບຄໍາຮ້ອງຕໍ່ກະຊວງຖະແຫຼງຂ່າວ, ວັດທະນະທໍາ ແລະທ່ອງທ່ຽວ.

ເອກະສານປະກອບຄໍາຮ້ອງຂໍອະນຸຍາດເຜີຍແຜ່ຮູບເງົາມີ ດັ່ງນີ້:

1. ໜັງສືສະເໜີຂໍອະນຸຍາດ;
2. ໜັງສືຢັ້ງຢືນລິຂະສິດຕໍ່ຮູບເງົາ;
3. ເອກະສານອື່ນທີ່ກ່ຽວຂ້ອງ.

ພາຍໃນເວລາ ສິບວັນລັດຖະການ ນັບແຕ່ໄດ້ຮັບຄໍາຮ້ອງ ພ້ອມດ້ວຍເອກະສານປະກອບຄໍາຮ້ອງ ຖືກຕ້ອງ, ຄົບຖ້ວນ ແລະໄດ້ຮັບການກວດກາຮູບເງົາແລ້ວ,ກະຊວງຖະແຫຼງຂ່າວ, ວັດທະນະທໍາ ແລະທ່ອງທ່ຽວຕ້ອງພິຈາລະນາອະນຸຍາດໃຫ້ເຜີຍແຜ່. ໃນກໍລະນີບໍ່ອະນຸຍາດຕ້ອງມີໜັງສືແຈ້ງຕອບ ແລະອະທິບາຍເຫດຜົນຈະແຈ້ງ.

**ມາດຕາ 18. ຮູບການເຜີຍແຜ່ຮູບເງົາ**

ຮູບການເຜີຍແຜ່ຮູບເງົາມີ ດັ່ງນີ້:

1. ສາຍໃນໂຮງຮູບເງົາ ແລະສາຍເຄື່ອນທີ່;
2. ອອກອາກາດທາງຄື້ນໂທລະພາບ ແລະສົ່ງເຂົ້າສາຍໃນເຄືອຄ່າຍອິນເຕີເນັດ;
3. ນໍາເອົາຮູບເງົາສົ່ງເຂົ້າສາຍຢູ່ງານສັບປະດາຮູບເງົາ ຫຼືງານມະໂຫລານຮູບເງົາສາກົນ;
4. ເຜີຍແຜ່ທາງກາແຊັດວີດີໂອ, ແຜ່ນຊີດີ, ວີຊີດີ, ດີວີດີ, ຮາດດິດ ຫຼືວັດຖຸບັນທຶກແບບອື່ນ;



5. ຮູບການເຜີຍແຜ່ແບບອື່ນ.

**ມາດຕາ 19. ການເຜີຍແຜ່ຮູບເງົາທາງໂທລະພາບ**

ຮູບເງົາທີ່ຈະອອກອາກາດທາງໂທລະພາບຕ້ອງໄດ້ຮັບອະນຸຍາດຈາກອົງການຄຸ້ມຄອງລັດດ້ານຮູບເງົາ ຫຼືໄດ້ຮັບອະນຸຍາດຈາກ ຜູ້ອໍານວຍການໃຫຍ່ໂທລະພາບແຫ່ງຊາດ.

**ມາດຕາ 20. ການສາຍຮູບເງົາຢູ່ໃນໂຮງ ແລະເຄື່ອນທີ່**

ການສາຍຮູບເງົາຢູ່ໃນໂຮງ ແລະເຄື່ອນທີ່ໃຫ້ປະຕິບັດ ດັ່ງນີ້ :

1. ບຸກຄົນ, ນິຕິບຸກຄົນ ຫຼືການຈັດຕັ້ງ ທັງພາຍໃນ ແລະຕ່າງປະເທດ ທີ່ມີຈຸດປະສົງດໍາເນີນການສາຍຮູບເງົາຢູ່ໃນໂຮງ ແລະເຄື່ອນທີ່ ຕ້ອງໄດ້ຮັບອະນຸຍາດຈາກກະຊວງຖະແຫຼງຂ່າວ, ວັດທະນະທໍາ ແລະທ່ອງທ່ຽວ,ສ່ວນຢູ່ທ້ອງຖິ່ນຕ້ອງຜ່ານພະແນກຖະແຫຼງຂ່າວ, ວັດທະນະທໍາ ແລະທ່ອງທ່ຽວແຂວງ, ນະຄອນ;
2. ເນື້ອໃນຮູບເງົາຕ້ອງຜ່ານການກວດກາຈາກກະຊວງຖະແຫຼງຂ່າວ, ວັດທະນະທໍາ ແລະທ່ອງທ່ຽວ, ພະແນກຖະແຫຼງຂ່າວ,ວັດທະນະທໍາ ແລະທ່ອງທ່ຽວແຂວງ, ນະຄອນ;
3. ຮູບເງົາທີ່ນໍາໄປສາຍຕ້ອງເປັນຮູບເງົາທີ່ດີມີລັກສະນະກ້າວໜ້າບໍ່ຂັດກັບຮີດຄອງປະເພນີອັນດີງາມຂອງຊາດ, ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ ແລະບໍ່ແຕະຕ້ອງເຖິງຄວາມສາມັກຄີກັບເພື່ອນມິດໃນໂລກ;
4. ຖ້າເປັນຮູບເງົາຕ່າງປະເທດຕ້ອງພາກເປັນພາສາລາວຫຼືນໍາໃຊ້ພາສາເດີມຢູ່ໃນຮູບເງົາ ແຕ່ຕ້ອງໃຫ້ແປເປັນພາສາລາວໃສ່ໜັງສືລອດ

ພົ້ນຢູ່ໃນໜ້າຈໍຮູບເງົາ.

**ມາດຕາ 21. ການຈັດ, ການເຂົ້າຮ່ວມສັບປະດາ, ງານມະຫາກຳຮູບເງົາ ແລະງານວາງສະແດງຮູບເງົາຢູ່ພາຍໃນປະເທດ**

ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະທ່ອງທ່ຽວຮັບຜິດຊອບຈັດສັບປະດາ ແລະງານມະກຳຮູບເງົາແຫ່ງຊາດ, ງານມະຫາກຳຮູບເງົາສາກົນຢູ່ ສປປ ລາວ ເປັນແຕ່ລະໄລຍະ.

ກະຊວງ, ອົງການທຽບເທົ່າກະຊວງ, ອົງການຈັດຕັ້ງສາກົນ, ອົງການປົກຄອງແຂວງ, ນະຄອນຮັບຜິດຊອບຈັດສັບປະດາ ແລະງານມະຫາກຳແຂ່ງຂັນຮູບເງົາໃນຂະແໜງວິຊາສະເພາະ, ຫົວຂໍ້ສະເພາະຕາມການເຫັນດີເປັນລາຍລັກອັກສອນຂອງກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະທ່ອງທ່ຽວ. ຮູບເງົາທີ່ເຂົ້າຮ່ວມການແຂ່ງຂັນຕ້ອງມີໃບອະນຸຍາດເຜີຍແຜ່ຈາກກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະທ່ອງທ່ຽວ;

ການຈັດຕັ້ງ, ນິຕິບຸກຄົນ, ບຸກຄົນພາຍໃນ ແລະຕ່າງປະເທດ ອາດສາຍຮູບເງົາຕ່າງປະເທດໄດ້ຕາມການເຫັນດີເປັນລາຍລັກອັກສອນຂອງກະຊວງຖະແຫຼງຂ່າວ,ວັດທະນະທຳ ແລະທ່ອງທ່ຽວ.

ໜັງສືສະເໜີຈັດງານມະຫາກຳຮູບເງົາ,ງານແຂ່ງຂັນຮູບເງົາໃນຂະແໜງວິຊາສະເພາະ, ຫົວຂໍ້ສະເພາະ ແລະການຈັດສາຍຮູບເງົາຕ່າງປະເທດຢູ່ ສປປ ລາວ ຕ້ອງມີຈຸດປະສົງ, ຂອບເຂດ, ເວລາ, ສະຖານທີ່ຈັດ, ລາຍຊື່ຮູບເງົາ ແລະເປົ້າໝາຍຜູ້ເຂົ້າຮ່ວມ; ພາຍໃນກຳນົດເວລາສິບວັນລັດຖະການ ນັບແຕ່ວັນໄດ້ຮັບໜັງສືສະເໜີ, ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະທ່ອງທ່ຽວຕ້ອງພິຈາລະນາ ແລະຕອບເປັນລາຍລັກອັກສອນຕໍ່ການຕົກລົງເຫັນດີຫຼື



ໃນກໍລະນີທາກບໍ່ເຫັນດີກໍຕ້ອງຕອບເປັນລາຍລັກອັກສອນ ພ້ອມທັງຊີ້ແຈງເຫດຜົນໃຫ້ຜູ້ສະເໜີ ດັ່ງກ່າວ.

**ມາດຕາ 22. ການເຂົ້າຮ່ວມງານມະຫາກຳຮູບເງົາ, ການແຂ່ງຂັນຮູບເງົາ, ງານວາງສະແດງຮູບເງົາສາກົນ ແລະການຈັດສັບປະດາຮູບເງົາຢູ່ຕ່າງປະເທດ**

ໜ່ວຍງານຜະລິດຮູບເງົາ, ຈຳໜ່າຍຮູບເງົາ, ເຜີຍແຜ່ຮູບເງົາ ແລະໄທລະພາບຂັ້ນຕ່າງໆຂອງ ສປປ ລາວ ສາມາດເຂົ້າຮ່ວມງານມະຫາກຳຮູບເງົາ, ງານແຂ່ງຂັນຮູບເງົາ ແລະງານວາງສະແດງຮູບເງົາສາກົນ ແລະສາມາດຈັດສັບປະດາຮູບເງົາລາວຢູ່ຕ່າງປະເທດຕາມການເຫັນດີເປັນລາຍລັກອັກສອນ ຂອງກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະທ່ອງທ່ຽວ;

ການຈັດຕັ້ງ, ນິຕິບຸກຄົນ, ບຸກຄົນຢູ່ຕ່າງປະເທດ ມີຈຸດປະສົງຈັດງານມະຫາກຳຮູບເງົາ, ການແຂ່ງຂັນຮູບເງົາ, ງານສະແດງຮູບເງົາສາກົນ ແລະການຈັດສັບປະດາຮູບເງົາກ່ຽວກັບ ສປປ ລາວ ຕ້ອງໄດ້ຮັບອະນຸຍາດຈາກສະຖານທູດລາວປະຈຳປະເທດທີ່ກ່ຽວຂ້ອງ;

ຮູບເງົາທີ່ນຳເຂົ້າຮ່ວມງານມະຫາກຳຮູບເງົາ, ງານແຂ່ງຂັນຮູບເງົາ ແລະງານວາງສະແດງຮູບເງົາສາກົນ ແລະການສັບປະດາຮູບເງົາລາວຢູ່ຕ່າງປະເທດ ຕ້ອງໄດ້ຮັບອະນຸຍາດເຜີຍແຜ່ຈາກກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະທ່ອງທ່ຽວກ່ອນຈຶ່ງສາມາດນຳເຂົ້າງານຕາມທີ່ກ່າວມານັ້ນ.

## ໝວດທີ 4

## ການສຳເນົາຮູບເງົາ

**ມາດຕາ 23. ການສຳເນົາຮູບເງົາ**

ບຸກຄົນ, ນິຕິບຸກຄົນ ຫຼືການຈັດຕັ້ງທັງພາຍໃນ ແລະຕ່າງປະເທດທີ່ເຄື່ອນໄຫວຖ່າຍທຳຮູບເງົາສາລະຄະດີ, ຮູບເງົາເລື່ອງ, ກາຕູນ ແລະຮູບເງົາປະເພດອື່ນຢູ່ ສປປ ລາວ ໃນເມື່ອຜະລິດຮູບເງົາສົມບູນແບບແລ້ວ ຕ້ອງສົ່ງຕົ້ນສະບັບໜຶ່ງສະບັບໃຫ້ກະຊວງຖະແຫຼງຂ່າວ,ວັດທະນະທຳ ແລະທ່ອງທ່ຽວພາຍໃນສິບສອງເດືອນເພື່ອເກັບຮັກສາໄວ້ສຳເນົາ. ຜະລິດເປັນຮູບເງົາປະເພດໃດໃຫ້ສົ່ງເປັນຮູບເງົາປະເພດນັ້ນ ເຊັ່ນ: ຟີມ 16 ມມ, 35 ມມ, ກາແຊັດວີດີໂອ, ແຜ່ນຊີດີ, ດີວີດີ, ຮາດດິດ ຫຼືວັດຖຸບັນທຶກແບບອື່ນ.

**ມາດຕາ 24. ການສຳເນົາຮູບເງົາແຫ່ງຊາດ**

ກະຊວງຖະແຫລງຂ່າວ, ວັດທະນະທຳ ແລະທ່ອງທ່ຽວ ເປັນອົງການສຳເນົາຮູບເງົາແຫ່ງຊາດໃນການຄຸ້ມຄອງສາງຟີມ, ອະນຸລັກ, ປົກປັກຮັກສາຮູບເງົາໃຫ້ຖືກຕ້ອງຕາມເຕັກນິກ, ຕິດຕາມກວດກາ ແລະສ້ອມແປງຄຸນນະພາບຂອງຮູບເງົາໃຫ້ສາມາດຄົງຢູ່ໄດ້ຕາມເວລາອັນສົມຄວນ.

## ໝວດທີ 5

## ການຄຸ້ມຄອງ ແລະກວດກາວຽກງານຮູບເງົາ

**ມາດຕາ 25. ອົງການຄຸ້ມຄອງ ແລະກວດກາວຽກງານຮູບເງົາ**



ລັດຖະບານ ຄຸ້ມຄອງວຽກງານຮູບເງົາຢ່າງລວມສູນ ແລະເປັນເອກະພາບໃນຂອບເຂດທົ່ວປະເທດໂດຍມອບໃຫ້ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະທ່ອງທ່ຽວເປັນຜູ້ຮັບຜິດຊອບໂດຍກົງ ແລະ ເປັນເຈົ້າການປະສານສົມທົບກັບຂະແໜງການອື່ນທີ່ກ່ຽວຂ້ອງ ແລະອົງການປົກຄອງທ້ອງຖິ່ນຈັດຕັ້ງປະຕິບັດວຽກງານກ່ຽວກັບຮູບເງົາ.

ອົງການຄຸ້ມຄອງ ແລະກວດກາວຽກງານຮູບເງົາປະກອບດ້ວຍ:

- ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະທ່ອງທ່ຽວ;
- ພະແນກຖະແຫຼງຂ່າວ, ວັດທະນະທຳ ແລະທ່ອງທ່ຽວແຂວງ,ນະຄອນ;
- ຫ້ອງການຖະແຫຼງຂ່າວ, ວັດທະນະທຳ ແລະທ່ອງທ່ຽວເມືອງ, ເທດສະບານ.

**ມາດຕາ 26. ສິດ ແລະ ໜ້າທີ່ຂອງກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະທ່ອງທ່ຽວ**

ໃນການຄຸ້ມຄອງວຽກງານຮູບເງົາ ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະທ່ອງທ່ຽວ ມີສິດ ແລະໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າຮ່າງນະໂຍບາຍ, ແຜນຍຸດທະສາດ, ລະບຽບກົດໝາຍ, ແຜນງານ, ແຜນການພັດ ທະນາຮູບເງົາ ເພື່ອສະເໜີລັດຖະບານພິຈາລະນາ;
2. ຜັນຂະຫຍາຍແນວທາງນະໂຍບາຍ, ແຜນຍຸດທະສາດເປັນແຜນງານ, ແຜນການ ແລະໂຄງການພັດທະນາຮູບເງົາ ແລະຈັດຕັ້ງປະຕິບັດ;
3. ໂຄສະນາເຜີຍແຜ່, ສຶກສາອົບຮົມແນວທາງນະໂຍບາຍ, ລະບຽບ

ກົດໝາຍກ່ຽວກັບວຽກງານຮູບເງົາ;

4. ຈັດຕັ້ງ, ຄຸ້ມຄອງ ແລະຊີ້ນຳການເຄື່ອນໄຫວຂອງໜ່ວຍງານຮູບເງົາ ທີ່ຂຶ້ນກັບຄວາມຮັບຜິດຊອບຂອງຕົນ;
5. ຊີ້ນຳ, ຊຸກຍູ້, ຕິດຕາມ, ກວດກາ ການເຄື່ອນໄຫວຂອງພະແນກຖະແຫຼງຂ່າວ, ວັດທະນະທຳ ແລະທ່ອງທ່ຽວແຂວງ, ນະຄອນໃນການຈັດຕັ້ງປະຕິບັດລະບຽບກົດໝາຍ, ແຜນການ, ໂຄງການກ່ຽວກັບຮູບເງົາ;
6. ກໍ່ສ້າງ, ບຳລຸງ, ຍົກລະດັບບຸກຄະລາກອນຮູບເງົາ ທາງດ້ານການເມືອງ ແລະວິຊາສະເພາະ;
7. ຄົ້ນຄວ້າ, ພິຈາລະນາ, ອະນຸຍາດ, ໂຈະ, ຍົກເລີກ ແລະຖອນໃບອະນຸຍາດສ້າງຕັ້ງ ແລະເຄື່ອນໄຫວກິດຈະການຮູບເງົາ;
8. ອອກ ແລະຖອນບັດນັກວິຊາການເຄື່ອນໄຫວວຽກງານຮູບເງົາ,ຂອງໜ່ວຍຮູບເງົາທັງພາຍໃນ ແລະຕ່າງປະເທດ ທີ່ ເຄື່ອນໄຫວບໍ່ຖືກຕ້ອງຕາມລະບຽບກົດໝາຍຂອງ ສປປ ລາວ;
9. ເກັບກູ້ ແລະ ທຳລາຍຜະລິດຕະພັນຮູບເງົາ ທີ່ບໍ່ຖືກຕ້ອງ;
10. ເກັບຮັກສາສຳເນົາຮູບເງົາເພື່ອເປັນຄັງມໍຣະດົກຂອງຊາດ;
11. ແກ້ໄຂຄຳສະເໜີ ແລະສະກັດກັ້ນການເຄື່ອນໄຫວຂອງຮູບເງົາ ທີ່ຂັດກັບລະບຽບກົດໝາຍ;
12. ພົວພັນ, ຮ່ວມມືກັບຕ່າງປະເທດ ແລະອົງການຈັດຕັ້ງສາກົນ ກ່ຽວກັບຮູບເງົາ;
13. ສະຫຼຸບ, ລາຍງານ ແລະປະເມີນຜົນ ໃນການຈັດຕັ້ງປະຕິບັດວຽກງານກ່ຽວກັບຮູບເງົາ ໃຫ້ລັດຖະບານເປັນປົກກະຕິ.
14. ນຳໃຊ້ສິດ ແລະປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ ແລະຕາມການມອບໝາຍ.



**ມາດຕາ 27. ສິດ ແລະໜ້າທີ່ຂອງພະແນກຖະແຫຼງຂ່າວ, ວັດທະນະທຳ ແລະທ່ອງທ່ຽວ ແຂວງ, ນະຄອນ**

ໃນການຄຸ້ມຄອງວຽກງານຮູບເງົາ ພະແນກຖະແຫຼງຂ່າວ, ວັດທະນະທຳ ແລະທ່ອງທ່ຽວແຂວງ, ນະຄອນ ມີສິດ ແລະໜ້າທີ່ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ໂຄສະນາ, ເຜີຍແຜ່, ສຶກສາອົບຮົມແນວທາງນະໂຍບາຍ, ລະບຽບກົດໝາຍກ່ຽວກັບວຽກງານຮູບເງົາ;
2. ຈັດຕັ້ງປະຕິບັດລະບຽບກົດໝາຍ, ແຜນການ, ແຜນງານ ແລະໂຄງການ;
3. ສຳຫຼວດ ແລະເກັບກຳຂໍ້ມູນກ່ຽວກັບວຽກງານຮູບເງົາ;
4. ຕິດຕາມແລະຊີ້ນຳການເຄື່ອນໄຫວວຽກງານຮູບເງົາ;
5. ຄຸ້ມຄອງການເຄື່ອນໄຫວຂອງນັກຖ່າຍທຳຮູບເງົາພາຍໃນແລະຕ່າງປະເທດທີ່ເຄື່ອນໄຫວພາຍໃນແຂວງ ແລະນະຄອນ;
6. ຄຸ້ມຄອງຮູບເງົາ ແລະການນຳເຂົ້າ-ສົ່ງອອກ ຮູບເງົາທີ່ເປັນກະແຊັດ ຫຼືແຜ່ນຮູບເງົາ;
7. ອອກ, ຖອນ ແລະລຶບລ້າງໃບອະນຸຍາດກ່ຽວກັບການຈຳໜ່າຍກະແຊັດ ຫຼືແຜ່ນຮູບເງົາ, ເກັບກູ້ ທຳລາຍຮູບເງົາທີ່ບໍ່ຖືກຕ້ອງ;
8. ຊີ້ນຳ, ຊຸກຍູ້ຫ້ອງການຖະແຫຼງຂ່າວ, ວັດທະນະທຳ ແລະທ່ອງທ່ຽວ

ເມືອງ, ເທດສະບານໃນການຈັດຕັ້ງປະຕິບັດວຽກງານຮູບເງົາ;

9. ແກ້ໄຂຄຳສະເໜີ ແລະສະກັດກັ້ນການເຄື່ອນໄຫວຮູບເງົາທີ່ຂັດກັບລະບຽບກົດໝາຍ;
10. ພົວພັນ ແລະຮ່ວມມືດ້ານຮູບເງົາກັບຕ່າງປະເທດຕາມການມອບໝາຍຂອງອົງການທີ່ມີສິດກ່ຽວຂ້ອງ;
11. ສະຫຼຸບ, ລາຍງານ ແລະປະເມີນຜົນໃນການຈັດຕັ້ງປະຕິບັດວຽກງານກ່ຽວກັບຮູບເງົາໃຫ້ຂັ້ນເທິງຂອງຕົນ;
12. ນຳໃຊ້ສິດ ແລະປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ ຫຼືຕາມການມອບໝາຍ.

**ມາດຕາ 28. ສິດ ແລະໜ້າທີ່ຂອງຫ້ອງການຖະແຫຼງຂ່າວ, ວັດທະນະທຳ ແລະທ່ອງທ່ຽວເມືອງ, ເທດສະບານ**

ໃນການຄຸ້ມຄອງວຽກງານຮູບເງົາ ຫ້ອງການຖະແຫຼງຂ່າວ, ວັດທະນະທຳ ແລະທ່ອງທ່ຽວເມືອງ, ເທດສະບານມີສິດ ແລະໜ້າທີ່ໃນຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ເຜີຍແຜ່ ສຶກສາອົບຮົມແນວທາງນະໂຍບາຍ ແລະລະບຽບກົດໝາຍກ່ຽວກັບຮູບເງົາ;
2. ຈັດຕັ້ງປະຕິບັດລະບຽບກົດໝາຍ ແຜນການ, ໂຄງການກ່ຽວກັບຮູບເງົາ;
3. ສຳຫຼວດ ເກັບກຳຂໍ້ມູນ ແລະຂຶ້ນບັນຊີຮູບເງົາ;
4. ອອກ, ຖອນ ແລະລຶບລ້າງໃບອະນຸຍາດຈຳໜ່າຍກາແຊັດ ຫຼືແຜ່ນຮູບເງົາ,ທຳລາຍຮູບເງົາທີ່ບໍ່ຖືກຕ້ອງ;



5. ປະສານສົມທົບກັບພາກສ່ວນອື່ນທີ່ກ່ຽວຂ້ອງໃນການຄຸ້ມຄອງ ແລະຈັດຕັ້ງປະຕິບັດວຽກງານຮູບເງົາ;
6. ສະຫຼຸບ, ລາຍງານ ແລະປະເມີນຜົນໃນການຈັດຕັ້ງປະຕິບັດວຽກງານກ່ຽວກັບຮູບເງົາໃຫ້ຂັ້ນເທິງຖັດຕົນ;
7. ນຳໃຊ້ສິດ ແລະປະຕິບັດໜ້າທີ່ອື່ນຕາມທີ່ໄດ້ກຳນົດ ໃນລະບຽບກົດໝາຍ ແລະຕາມການມອບໝາຍ.

**ມາດຕາ 29. ສິດ ແລະໜ້າທີ່ຂອງຂະແໜງການ ແລະພາກສ່ວນອື່ນ**

ບັນດາຂະແໜງການ, ອົງການ ແລະພາກສ່ວນອື່ນທີ່ກ່ຽວຂ້ອງມີສິດ ແລະໜ້າທີ່ປະສານສົມທົບກັບຂະແໜງການຖະແຫລງຂ່າວ, ວັດທະນະທຳ ແລະທ່ອງທ່ຽວໃນການຄຸ້ມຄອງ, ສົ່ງເສີມ ແລະພັດທະນາວຽກງານຮູບເງົາຕາມພາລະບົດບາດຂອງຕົນ.

## ໝວດທີ 6
## ການແກ້ໄຂຂໍ້ຂັດແຍ່ງ ກ່ຽວກັບຮູບເງົາ

**ມາດຕາ 30. ການແກ້ໄຂຂໍ້ຂັດແຍ່ງ**

ການແກ້ໄຂຂໍ້ຂັດແຍ່ງທີ່ມີລັກສະນະທົ່ວໄປກ່ຽວກັບການສ້າງຕັ້ງ ແລະເຄື່ອນໄຫວ ຫຼືດຳເນີນກິດຈະການຮູບເງົາ ແມ່ນໃຫ້ຄູ່ກໍລະນີແກ້ໄຂກັນດ້ວຍວິທີການປະນີປະນອມ ຖ້າຫາກບໍ່ສາມາດຕົກລົງກັນໄດ້ ແມ່ນໃຫ້ສະເໜີຕໍ່ ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະທ່ອງທ່ຽວ ເປັນຜູ້ແກ້ໄຂ, ສ່ວນຢູ່ທ້ອງຖິ່ນໃຫ້ສະເໜີຕໍ່ພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ແຂວງນະຄອນບ່ອນທີ່ຕົນໄດ້ຮັບອະນຸຍາດເປັນຜູ້ແກ້ໄຂຕາມລະບຽບ.

ມາດຕາ 31. ການແກ້ໄຂຂໍ້ຂັດແຍ່ງທີ່ມີລັກສະນະສາກົນ

ການແກ້ໄຂຂໍ້ຂັດແຍ່ງທີ່ມີລັກສະນະສາກົນກ່ຽວກັບຮູບເງົາ ແມ່ນໃຫ້ປະຕິບັດຕາມສົນທິສັນຍາ ຫຼືສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ.

## ໝວດທີ 7
## ຂໍ້ຫ້າມ

ມາດຕາ 32. ຂໍ້ຫ້າມສຳລັບຜູ້ເຄື່ອນໄຫວວຽກງານຮູບເງົາ

ຫ້າມຜູ້ເຄື່ອນໄຫວວຽກງານຮູບເງົາ ມີພຶດຕິກຳ ດັ່ງນີ້:

1. ໂຄສະນາຕ້ານສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ;
2. ໂຄສະນາແບ່ງແຍກຄວາມສາມັກຄີ ແລະສ້າງຄວາມອາຄາດບາດໝາງ ລະຫວ່າງປະຊາຊົນບັນດາເຜົ່າ ແລະຄວາມສາມັກຄີລະຫວ່າງຊາດ;
3. ໂຄສະນາເຜີຍແຜ່ໃຫ້ມີແນວຄິດເຊື່ອມເສຍ, ເປັນໄພຕໍ່ສັງຄົມ, ລາມົກອານາຈານ, ການກະທຳທີ່ໂຫດຫ້ຽມ, ເຊື່ອຖືງົມງວາຍ ແລະທຳລາຍຮີດຄອງປະເພນີອັນດີງາມຂອງຊາດ;
4. ເປີດເຜີຍຄວາມລັບຂອງ ພັກ-ລັດ, ຄວາມລັບດ້ານການທະຫານ, ຄວາມໝັ້ນຄົງຂອງຊາດ, ເສດຖະກິດ ແລະການພົວພັນຕ່າງປະເທດ, ຄວາມລັບຂອງບຸກຄົນ ແລະຄວາມລັບອື່ນຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ;
5. ເສກສັນປັ້ນແຕ່ງ,ບິດເບືອນຄວາມຈິງ, ພົກປັ້ນປະຫັວດສາດ, ປະຕິເສດຜົນງານການປະຕິວັດ;



6. ມີພຶດຕິກຳອື່ນທີ່ເປັນການລະເມີດລະບຽບກົດໝາຍ.

ມາດຕາ 33. ຂໍ້ຫ້າມສຳລັບພະນັກງານກ່ຽວກັບວຽກງານຮູບເງົາ

ຫ້າມພະນັກງານກ່ຽວກັບວຽກງານຮູບເງົາ ແລະຜູ້ເຂົ້າຮ່ວມງານສ້າງຂໍ້ມູນຂ່າວສານຝືນກັບຈັນຍາບັນຂອງນັກວິຊາການຮູບເງົາລາວ, ໃຊ້ຄວາມຫຍາບຊ້າ ລວມທັງຫ້າມມີພຶດຕິກຳ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 32 ຂອງດຳລັດສະບັບນີ້.

ມາດຕາ 34. ຂໍ້ຫ້າມສຳລັບການຈັດຕັ້ງ ແລະບຸກຄົນອື່ນ

ຫ້າມການຈັດຕັ້ງ ແລະບຸກຄົນອື່ນ ມີພຶດຕິກຳ ດັ່ງນີ້:

1. ກີດຂວາງການເຄື່ອນໄຫວຂອງນັກວິຊາການຮູບເງົາ, ຜູ້ເຂົ້າຮ່ວມງານ ແລະແຊກແຊງບົດຮູບເງົາທີ່ຖືກຕ້ອງຕາມລະບຽບກົດໝາຍ;
2. ກີດຂວາງການຜະລິດ ແລະການເຜີຍແຜ່ຮູບເງົາທຸກປະເພດທີ່ຖືກຕ້ອງຕາມລະບຽບກົດໝາຍ;
3. ຜະລິດ, ນຳເຂົ້າແລະເຜີຍແຜ່ຮູບເງົາທີ່ບໍ່ໄດ້ຮັບອະນຸຍາດ;
4. ໃຊ້ຄວາມຮຸນແຮງ, ບັງຄັບ, ນາບຂູ່, ໃສ່ຮ້າຍປ້າຍສີ, ໝິ່ນປະໝາດ ແລະໃຊ້ຄວາມຫຍາບຊ້າຕໍ່ນັກວິຊາການຮູບເງົາ;
5. ມີພຶດຕິກຳອື່ນທີ່ເປັນການລະເມີດລະບຽບກົດໝາຍ.

## ໝວດທີ 8
## ຄ່າທຳນຽມ ແລະຄ່າບໍລິການ

ມາດຕາ 35. ຄ່າທຳນຽມ ແລະຄ່າບໍລິການ

ບຸກຄົນ, ນິຕິບຸກຄົນ ແລະການຈັດຕັ້ງທີ່ເຄື່ອນໄຫວດໍາເນີນກິດຈະກ
ຜະລິດຕະພັນຮູບເງົາ ຕ້ອງເສຍຄ່າທໍານຽມ ແລະຄ່າບໍລິການຕາມລັດຖະບັ
ຍັດຂອງປະທານປະເທດທີ່ກໍານົດອອກໃນແຕ່ລະໄລຍະ;

ຄ່າທໍານຽມຕ້ອງມອບເຂົ້າງົບປະມານແຫ່ງລັດຢ່າງຄົບຖ້ວນ, ສ່ວນຄ່າບໍລິ
ການ ຕ້ອງລາຍງານລາຍຮັບ ແລະລາຍຈ່າຍໃຫ້ກະຊວງການເງິນເປັນປົກກະຕິ.

## ໝວດທີ 9

## ນະໂຍບາຍຕໍ່ຜູ້ມີຜົນງານ ແລະມາດຕະການຕໍ່ຜູ້ລະເມີດ

### ມາດຕາ 36. ນະໂຍບາຍຕໍ່ຜູ້ມີຜົນງານ

ບຸກຄົນ,ນິຕິບຸກຄົນແລະການຈັດຕັ້ງທີ່ມີຜົນງານດີເດັ່ນໃນການປະກອບສ່ວນເຂົ້າໃນວຽກງານຮູບເງົາຈະໄດ້ຮັບຍ້ອງຍໍ ເຊັ່ນ ຫລຽນໄຊ, ຫລຽນກາ, ໃບຍ້ອງຍໍ, ນາມມະຍົດ ແລະນະໂຍບາຍອື່ນຕາມຄວາມເໝາະສົມ.

### ມາດຕາ 37. ມາດຕະການຕໍ່ຜູ້ລະເມີດ

ບຸກຄົນ,ນິຕິບຸກຄົນຫຼືການຈັດຕັ້ງທີ່ລະເມີດດໍາລັດສະບັບນີ້ ແລະລະບຽບກົດໝາຍອື່ນທີ່ກ່ຽວຂ້ອງຈະຖືກປະຕິບັດມາດຕະການຕາມກໍລະນີເບົາ ຫຼື
ໜັກ ຄື: ສຶກສາອົບຮົມກ່າວເຕືອນ, ປັບໃໝ, ໂຈະການເຄື່ອນໄຫວຊົ່ວຄາວ, ຖອນໃບອະນຸຍາດເຄື່ອນໄຫວວຽກງານຮູບເງົາ, ຖອນບັດນັກວິຊາການເຄື່ອນໄຫວວຽກງານຮູບເງົາ ແລະໃຊ້ແທນຄ່າເສຍຫາຍທາງແພ່ງ ຫຼືຖືກລົງໂທດທາງອາຍາ.



## ໝວດທີ 10

## ບົດບັນຍັດສຸດທ້າຍ

### ມາດຕາ 38. ການຈັດຕັ້ງປະຕິບັດ

ມອບໃຫ້ກະຊວງຖະແຫຼງຂ່າວ, ວັດທະນະທໍາ ແລະທ່ອງທ່ຽວ ເປັນເຈົ້າການສົມທົບກັບພາກສ່ວນທີ່ກ່ຽວຂ້ອງຈັດຕັ້ງປະຕິບັດດໍາລັດສະບັບນີ້ ໃຫ້ປາກົດຜົນເປັນຈິງ ແລະເຂັ້ມງວດ.

ບັນດາກະຊວງ, ອົງການທຽບເທົ່າກະຊວງ, ອົງການປົກຄອງທ້ອງຖິ່ນ, ນິຕິບຸກຄົນ, ບຸກຄົນ ຈົ່ງຮັບຮູ້ ແລະປະຕິບັດຕາມ ດໍາລັດສະບັບນີ້ ຢ່າງເຂັ້ມງວດ.

### ມາດຕາ 39. ຜົນສັກສິດ

ດໍາລັດສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ແລະພາຍຫຼັງໄດ້ລົງໃນຈົດໝາຍເຫດທາງລັດຖະການ ສິບຫ້າວັນ.

ຂໍ້ກໍານົດ, ບົດບັນຍັດໃດ ທີ່ຂັດກັບດໍາລັດສະບັບນີ້ ລ້ວນແຕ່ຖືກຍົກເລີກ.

ນາຍົກລັດຖະມົນຕີ

ທອງສິງ ທໍາມະວົງ